# ປະກາດຮັບສະໝັກພະນັກງານ

ບໍລິສັດ ຊີເອສຊີ ຄອມເພລັກ ເຊັນເຕີ້ ຈຳກັດຜູ້ດຽວ ເປັນບໍລິສັດຊັ້ນນຳຂອງປະເທດລາວທີ່ດຳເນີນທຸລະກິດໃນການຈຳໜ່າຍວັດສະດຸກໍ່ສ້າງ, ເຄື່ອງຕົບແຕ່ງພາຍໃນເຮືອນ, ເຄື່ອງໃຊ້ໄຟຟ້າ, ເຄື່ອງໃຊ້ຄົວເຮືອນ ແລະ ອື່ນໆ ຈາກຫຼາຍແບນສິນຄ້າທີ່ນຳເຂົ້າຈາກຕ່າງປະເທດເປັນຕົ້ນແມ່ນ: ປະເທດໄທ, ຈີນ, ອິນເດຍ, ອິດຕະລີ ແລະ ອື່ນໆ ເຊິ່ງປະຈຸບັນມີຫຼາຍກວ່າ 100,000 ລາຍການໄວ້ຄອຍບໍລິການລູກຄ້າ.

ປະຈຸບັນ ບໍລິສັດ ຊີເອສຊີ ຄອມເພລັກ ເຊັນເຕີ້ ຈຳກັດຜູ້ດຽວ ມີ 3 ສາຂາໄດ້ແກ່: ສາຂາປາກເຊ, ສາຂາປາກຊັນ ແລະ ສາຂານະຄອນຫຼວງວຽງຈັນ. ອີງໃສ່ການເຕີບໃຫຍ່ຂະຫຍາຍໂຕຂອງທຸລະກິດ ບໍລິສັດຂອງພວກເຮົາຈຶ່ງຕ້ອງການເພື່ອນຮ່ວມງານທີ່ມີຄວາມຮູ້ຄວາມສາມາດ ເພື່ອເປັນສ່ວນໜຶ່ງໃນການພັດທະນາບໍລິສັດ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

**1. ພະນັກງານຂາຍໂຄງການ ແລະ ຮ້ານຄ້າຊ່ວງ (ປະຈຳ ສາຂານະຄອນຫຼວງວຽງຈັນ) ຈຳນວນ 2 ຕຳແໜ່ງ.**

➢ **ໜ້າທີ່ຄວາມຮັບຜິດຊອບ**

- ວາງແຜນການຂາຍສິນຄ້າໃຫ້ລູກຄ້າໂຄງການ ແລະ ຮ້ານຄ້າຊ່ວງທັງພາຍໃນ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃກ້ຄຽງໃຫ້ໄດ້ຕາມເປົ້າທີ່ບໍລິສັດກຳນົດໃຫ້;
- ລົງຕິດຕາມໃກ້ຊິດລູກຄ້າທັງພາຍໃນ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃກ້ຄຽງ ເພື່ອໃຫ້ເກີດການຊື້ຕໍ່ເນື່ອງ;
- ໂຄສະນາປະຊາສຳພັນສິນຄ້າ ແລະ ໂປໂມຊັ່ນຕ່າງໆເປັນປະຈຳ ເພື່ອເພີ່ມຍອດຂາຍ;
- ເກັບກຳຂໍ້ມູນສິນຄ້າ ແລະ ໂປໂມຊັ່ນ ພ້ອມທັງວິເຄາະຄວາມຕ້ອງການສິນຄ້າ ແລະ ບໍລິການຂອງແຕ່ລະທ້ອງຖິ່ນ ເພື່ອເປັນຂໍ້ມູນໃນການປັບແຜນການຂາຍໃຫ້ແທດເໝາະ;
- ເກັບກຳຂໍ້ຄິດເຫັນ ແລະ ຄຳສະເໜີຂອງລູກຄ້າ ເພື່ອປຶກສາຝ່າຍທີ່ກ່ຽວຂ້ອງໃນການແກ້ໄຂບັນຫາໄດ້ຢ່າງທັນການ.

➢ **ເງື່ອນໄຂຂອງຜູ້ສະໝັກ:**

- ເພດຊາຍ ຫຼື ເພດຍິງ ອາຍຸບໍ່ເກີນ 35ປີ;
- ຈົບການສຶກສາໃນລະດັບຊັ້ນສູງຂຶ້ນໄປໃນສາຂາ ເສດຖະສາດ, ບໍລິຫານທຸລະກິດ, ບັນຊີ-ການເງິນ ແລະ ສາຂາອື່ນໆ;
- ມີບຸກຄະລິກກະພາບດີ, ມີທັກສະໃນການສື່ສານທີ່ດີ, ມີປະສົບການດ້ານການຂາຍ 02ປີຂຶ້ນໄປ;
- ມີຈັນຍາບັນ, ມີຄວາມຮັບຜິດຊອບຕໍ່ໜ້າທີ່, ມີຄວາມກະຕືລືລົ້ນ, ຫ້າວຫັນ ແລະ ເຮັດວຽກເປັນທີມ;
- ສາມາດເດີນທາງໄປເຮັດວຽກຕ່າງແຂວງ. ຖ້າມີຄວາມຮູ້ທາງດ້ານພາສາຕ່າງປະເທດຈະພິຈາລະນາເປັນພິເສດ;
- ເງິນເດືອນ ແລະ ສະຫັວດດີການດີ ເຊິ່ງຈະຂຶ້ນກັບຄວາມສາມາດ ແລະ ປະສົບການເປັນຫຼັກ (ສາມາດຕໍ່ລອງໄດ້).

ຜູ້ທີ່ສົນໃຈ ກະລຸນາສົ່ງໃບສະໝັກເຊິ່ງປະກອບດ້ວຍ: ຊີວະປະຫວັດ, ໃບປະກາດ, ໃບຄະແນນ, ໃບຜ່ານງານ (ຖ້າມີ) ແລະ ໃບແຈ້ງໂທດມາທີ່: admin-hr.hq@csccomplexcenter.la ຫຼື phouphanh.hr@csccomplexcenter.la ຫຼື ໂທສອບຖາມຂໍ້ມູນໄດ້ທີ່ເບີ: 9835 5553.

**ປິດຮັບສະໝັກວັນທີ 24 ກຸມພາ 2020**